ຈົດໝາຍແຈ້ງການສຳລັບພໍ່ແມ່

(Parent Notification Letter – Lao)

ວັນທີ:

ເຖິງ ພໍ່ແມ່/ຜູ້ປົກຄອງຕາມກົດໝາຍຂອງ ________________________________:

(ຊື່ຂອງນັກຮຽນ)

ກົດໝາຍຂອງຣັຖມິນີໂຊຕ້າ ແລະຣັຖບານກາງ ວ່າດ້ວຍເລື່ອງການບໍ່ປ່ອຍໃຫ້ເດັກນ້ອຍຫລ້າຫລັງດ້ານການສຶກສາ (Minnesota Law and the federal *No Child Left Behind Act* :NCLB) ກຳນົດໃຫ້ພວກເຮົາ ຊອກເບິ່ງວ່າ ນັກຮຽນໃນເຂດສຶກສາຂອງພວກເຮົາ ແມ່ນນັກຮຽນທີ່ຈຳເປັນຕ້ອງໄດ້ຮຽນພາສາອັງກິດ (ELLs) ຫລືບໍ່. ກົດໝາຍທັງສອງນີ້ ກຳນົດວ່າ ໃຫ້ມີໂຄງການສອນດ້ານພາສາ ສຳລັບຜູ້ຮຽນພາສາອັງກິດທີ່ມີຄວາມສາມາດຈຳກັດດ້ານພາສາອັງກິດ. ນອກຈາກນີ້, ກົດໝາຍ NCLB ຍັງກຳນົດໃຫ້ພວກເຮົາ ສະໜອງຂໍ້ມູນໃຫ້ແກ່ທ່ານ ກ່ຽວກັບຂັ້ນຕອນການກວດສອບລູກຂອງທ່ານ, ການບໍລິການດ້ານການສອນ ແລະຂໍ້ມູນອື່ນໆ, ດັ່ງທີ່ບັນຍາຍໄວ້ໃນ *ເອກະສານຂໍ້ມູນເລື້ອງ ການບໍ່ປ່ອຍໃຫ້ເດັກນ້ອຍຫລ້າຫລັງດ້ານການສຶກສາ (No Child Left Behind Fact Sheet).* ຂັ້ນຕອນການກວດສອບ ແລະການຈັດຫ້ອງຮຽນໃຫ້ລູກຂອງທ່ານ ໃນໂຄງການຮຽນດ້ານພາສາ ແມ່ນອີງຕາມຂໍ້ມູນທີ່ໄດ້ຈາກແບບຄຳຖາມກ່ຽວກັບ ການໃຊ້ພາສາຢູ່ເຮືອນ, ຄວາມເຫັນຂອງນາຍຄູ, ຜົນສອບເສັງພາສາອັງກິດ ແລະເກນວັດແທກອື່ນໆ. ຄະແນນສອບເສັງຄວາມສາມາດດ້ານພາສາອັງກິດຂອງລູກທ່ານ ແມ່ນສະແດງໄວ້ດັ່ງລຸ່ມນີ້.

**ຜົນສອບເສັງພາສາອັງກິດຂອງລູກທ່ານ**

| ການທົດສອບ ຄວາມຊຳນານ | ຊື່ຂອງການສອບເສັງ | ວັນທີສອບເສັງ | ຄະແນນ ຂອງນັກຮຽນ | ລະດັບຄວາມຊຳນານ ດ້ານພາສາອັງກິດ |
|---|---|---|---|---|
| ການເວົ້າ ແລະການຟັງ | | | | |
| ການອ່ານ | | | | |
| ການຂຽນ | | | | |

ລູກຂອງທ່ານ ໄດ້ຖືກກຳນົດວ່າ ເປັນຜູ້ທີ່ຈຳເປັນຕ້ອງໄດ້ຮຽນພາສາອັງກິດ (ELL). ລູກຂອງທ່ານຈະຖືກຈັດເຂົ້າຮຽນໃນໂຄງການ ESL/Bilingual Education program ( ໂຄງການສຶກສາພາສາອັງກິດເປັນພາສາທີສອງ/ ໂຄງການສອງພາສາ), ດັ່ງທີ່ບັນຍາຍໄວ້ໃນເອກະສານຄັດຕິດ. ພວກເຮົາເຊື່ອວ່າ ໂຄງການນີ້ຈະສະໜອງ ຄວາມຈຳເປັນດ້ານການສຶກສາໃຫ້ແກ່ລູກຂອງທ່ານໄດ້ ແລະຈະຊ່ວຍຍົກລະດັບຄວາມສຳເລັດດ້ານການສຶກສາຂອງຜູ້ກ່ຽວໃນໂຮງຮຽນໄດ້.

ທ່ານສາມາດຖອນລູກຂອງທ່ານອອກຈາກໂຄງການ ຍາມໃດກໍ່ໄດ້ ໂດຍສົ່ງຈົດໝາຍໃຫ້ແກ່ທາງໂຮງຮຽນ, ໂດຍແຈ້ງໃຫ້ຮູ້ວ່າທ່ານຕ້ອງການຖອນລູກຂອງທ່ານອອກຈາກໂຄງການ ESL/Bilingual Education. ຈາກນັ້ນ ລູກຂອງທ່ານ ກໍ່ຈະຖືກຈັດເຂົ້າຮຽນໃນໂຄງການສຶກສາທຳມະດາ ຊຶ່ງເປັນໂຄງການສຳລັບນັກຮຽນທີ່ມີຄວາມຮູ້ຄວາມຊຳນານດ້ານພາສາອັງກິດ. ກະຣຸນາພິຈາລະນາການຕັດສິນໃຈຂອງທ່ານຢ່າງຮອບຄອບ ກ່ຽວກັບຜົນສະທ້ອນທີ່ຈະເກີດຂຶ້ນ ຕໍ່ກັບຄວາມສຳເລັດດ້ານການສຶກສາລະຍະຍາວຂອງລູກທ່ານ.

ພວກເຮົາຂໍເຊີນທ່ານ ມາຢ້ຽມຊົມໂຮງຮຽນ ແລະພົບປະກັບເຈົ້າໜ້າທີ່ຂອງພວກເຮົາ ເພື່ອຮຽນຮູ້ຕື່ມ ກ່ຽວກັບຜົນປະໂຫຍດຂອງໂຄງການ ແລະການບໍລິການອື່ນໆ ທີ່ມີໄວ້ບໍລິການໃນໂຮງຮຽນ. ຖ້າວ່າ ທ່ານມີຄຳຖາມໃດໆ, ກະຣຸນາໂທຣຫາໂຮງຮຽນທີ່ ______________________.

ດ້ວຍຄວາມຈິງໃຈ,

________________________________

ຜູ້ບໍລິຫານຂອງໂຮງຮຽນ